ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 1003/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 23 NOV 2009

# ຂໍ້ຕົກລົງ

## ວ່າດ້ວຍ ການປະຕິບັດນະໂຍບາຍທຶນສົມທົບປຸກສ້າງ ແລະ ສ້ອມແປງທີ່ພັກອາໄສ ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍເຮືອນປະຈຳຕຳແໜ່ງ ແລະເງິນສົມທົບປຸກສ້າງຂອງພະນັກງານການນຳຂັ້ນສູງ ສະບັບເລກທີ 120/ກມສພ ລົງວັນທີ 10/08/2007;
- ອີງຕາມການຄົ້ນຄວ້ານຳສະເໜີຂອງກົມຈັດຕັ້ງແລະພະນັກງານ ແລະເຫັນດີເປັນເອກະພາບຂອງບັນດາກົມ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານທີ່ພັກອາໄສຂອງພະນັກງານ-ລັດຖະກອນທະນາຄານແຫ່ງ ສປປ ລາວ ແລະເປັນບ່ອນອີງໃນການກຳນົດເງື່ອນໄຂ, ວົງເງິນ ແລະຮັບປະກັນການນຳໃຊ້ທຶນດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະມີປະສິດທິຜົນ.

ມາດຕາ 2. ເປົ້າໝາຍ ແລະເງື່ອນໄຂຂອງຜູ້ທີ່ຈະໄດ້ຮັບນະໂຍບາຍ

1. ເປັນພະນັກງານທະນາຄານແຫ່ງ ສປປ ລາວ ທີ່ມີຄວາມຫ້າວຫັນ ແລະມີຜົນງານດີໃນການປະຕິບັດວຽກງານຕາມການຈັດຕັ້ງມອບໝາຍ;
2. ມີອາຍຸການເຮັດວຽກ ດັ່ງນີ້ :
   - ເລຂາຄະນະພັກ ແລະຜູ້ວ່າການ ທຫລ, ຮອງເລຂາຄະນະພັກ ແລະຮອງຜູ້ວ່າການ ທຫລ, ຄະນະພັກ ທຫລ, ຄະນະກົມ ແລະທຽບເທົ່າ, ຄະນະພະແນກ ແລະທຽບເທົ່າ ແມ່ນ 5 ປີ ຂຶ້ນໄປ;
   - ພະນັກງານວິຊາການແມ່ນ 10 ປີ ຂຶ້ນໄປ;

- ສຳລັບພະນັກງານທີ່ຍົກຍ້າຍມາຈາກກົມກອງອື່ນ ຕ້ອງມີອາຍຸການເຮັດວຽກນຳລັດ 10 ປີ, ໃນນັ້ນ ຕ້ອງເຮັດວຽກຢູ່ທະນາຄານແຫ່ງ ສປປ ລາວ 5 ປີ ຂຶ້ນໄປ.

3. ມີຄວາມຫຍຸ້ງຍາກທາງດ້ານທີ່ພັກອາໄສ;
4. ບໍ່ເຄີຍຖືກປະຕິບັດວິໄນຂັ້ນ 2 ຂຶ້ນໄປ ( ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ ) ໃນຊ່ວງໄລຍະ 5 ປີ ຜ່ານມາ;
5. ມີດິນທີ່ຈະປຸກສ້າງ ແລະໄດ້ດຳເນີນການປຸກສ້າງ ຫຼື ສ້ອມແປງແລ້ວ 30% ຂອງມູນຄ່າທັງໝົດ.

<u>ມາດຕາ 3 .</u> ວົງເງິນການປະຕິບັດນະໂຍບາຍແຕ່ລະຕຳແໜ່ງງານ ດັ່ງນີ້ :

| | | |
|---|---|---|
| 1. | ເລຂາຄະນະພັກ, ຜູ້ວ່າການ ທຫລ | 400 ລ້ານ ກີບ |
| 2. | ຮອງເລຂາຄະນະພັກ, ຮອງຜູ້ວ່າການ ທຫລ | 350 ລ້ານ ກີບ |
| 3. | ຄະນະພັກ ທຫລ | 300 ລ້ານ ກີບ |
| 4. | ຫົວໜ້າກົມ ແລະທຽບເທົ່າ | 250 ລ້ານ ກີບ |
| 5. | ຮອງຫົວໜ້າກົມ ແລະທຽບເທົ່າ | 150 ລ້ານ ກີບ |
| 6. | ຫົວໜ້າພະແນກ ແລະທຽບເທົ່າ | 100 ລ້ານ ກີບ |
| 7. | ຮອງຫົວໜ້າພະແນກ ແລະທຽບເທົ່າ | 80 ລ້ານ ກີບ |
| 8. | ພະນັກງານວິຊາການ | 60 ລ້ານ ກີບ |

<u>ມາດຕາ 4 .</u> ງົບປະມານທີ່ນຳໃຊ້ໃນແຕ່ລະປີ

ງົບປະມານທີ່ນຳໃຊ້ແຕ່ລະປີ ແມ່ນໄດ້ມາຈາກແຫຼ່ງງົບປະມານຂອງທະນາຄານແຫ່ງ ສປປ ລາວ ທີ່ຂຶ້ນໄວ້ໃນແຕ່ລະປີ ຊຶ່ງໄດ້ຮັບການອະນຸມັດຈາກສະພາບໍລິຫານ ທຫລ.

<u>ມາດຕາ 5 .</u> ການຕິດຕາມແລະກວດກາການນຳໃຊ້ທຶນ

ຄະນະກຳມະການການຄົ້ນຄວ້ານະໂຍບາຍຕໍ່ພະນັກງານ-ລັດຖະກອນທະນາຄານແຫ່ງ ສປປ ລາວ ຕິດຕາມ ແລະກວດກາການນຳໃຊ້ເງິນດັ່ງກ່າວໃຫ້ຖືກຕ້ອງກັບເປົ້າໝາຍຕົວຈິງ.

<u>ມາດຕາ 6 .</u> ການຊຳລະທຶນຄືນຂອງແຕ່ລະຕຳແໜ່ງງານ

ໃຫ້ຫ້ອງການເຮັດສັນຍາເງິນກູ້ ແລະຊຳລະລະລາງກັບແຕ່ລະເປົ້າໝາຍເປັນໄລຍະຍາວ ຕາມລະບຽບຂອງທະນາຄານແຫ່ງ ສປປ ລາວ.

<u>ມາດຕາ 7 .</u> ການຈັດຕັ້ງປະຕິບັດ

ມອບໃຫ້ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມ ແລະທຽບເທົ່າ ຈົ່ງຮັບຮູ້, ເປັນເຈົ້າການຈັດຕັ້ງເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໄດ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະທົ່ວເຖິງ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ. ຜ່ານການຈັດຕັ້ງປະຕິບັດຕົວຈິງໃນແຕ່ລະໄລຍະ ຖ້າພົບຄວາມຫຍຸ້ງຍາກໃຫ້ລາຍງານຄະນະຜູ້ວ່າການຊາບ ໂດຍຜ່ານຫ້ອງການ ແລະກົມຈັດຕັ້ງແລະພະນັກງານ.

<u>ມາດຕາ 8 .</u> ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ — ຜູ້ວ່າການ

ພູເພັດ ຄຳພູນວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 01 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 7 ທັນວາ 2009

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ຕົກລົງເລກທີ 1003/ທຫລ ວ່າດ້ວຍ ການປະຕິບັດນະໂຍບາຍທຶນສົມທົບປຸກສ້າງ ແລະ ສ້ອມແປງທີ່ພັກອາໄສ ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ

---

- ອີງຕາມຂໍ້ຕົກລົງວ່າດ້ວຍ ການປະຕິບັດນະໂຍບາຍທຶນສົມທົບປຸກສ້າງ ແລະສ້ອມແປງທີ່ພັກອາໄສໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ສະບັບເລກທີ 1003/ທຫລ ລົງວັນທີ 23/11/2009;
- ເພື່ອຄວາມເປັນເອກະພາບ ແລະເຂົ້າໃຈຕໍ່ເນື້ອໃນ, ວິທີການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນດີ.

ຫົວໜ້າກົມຈັດຕັ້ງແລະພະນັກງານທະນາຄານແຫ່ງ ສປປ ລາວ ອອກຄຳແນະນຳ :

I. <u>ວ່າດ້ວຍເປົ້າໝາຍ ແລະເງື່ອນໄຂຜູ້ທີ່ຈະໄດ້ຮັບນະໂຍບາຍ.</u>

ເປົ້າໝາຍ ແລະເງື່ອນໄຂຜູ້ທີ່ຈະໄດ້ຮັບນະໂຍບາຍ ຕາມຂໍ້ຕົກລົງເລກທີ 1003/ທຫລ ລົງວັນທີ 23/11/2009 ມີຄື :

1. ເປັນພະນັກງານທະນາຄານແຫ່ງ ສປປ ລາວ ທີ່ມີຄວາມຫ້າວຫັນ ແລະມີຜົນງານດີໃນການປະຕິບັດວຽກງານຕາມການຈັດຕັ້ງມອບໝາຍ ຊຶ່ງໄດ້ຮັບການປະເມີນຜົນໃນແຕ່ລະປີ;
2. ມີອາຍຸການເຮັດວຽກ ດັ່ງນີ້ :

- ເລຂາຄະນະພັກ ແລະຜູ້ວ່າການ ທຫລ, ຮອງເລຂາຄະນະພັກ ແລະຮອງຜູ້ວ່າການ ທຫລ, ຄະນະພັກ ທຫລ, ຄະນະກົມ ແລະທຽບເທົ່າ, ຄະນະພະແນກ ແລະທຽບເທົ່າ ແມ່ນ 5 ປີ ຂຶ້ນໄປ;
- ພະນັກງານວິຊາການແມ່ນ 10 ປີ ຂຶ້ນໄປ;
- ສຳລັບພະນັກງານທີ່ຍົກຍ້າຍມາຈາກ<u>ກົມກອງ</u>ອື່ນ ຕ້ອງມີອາຍຸການເຮັດວຽກນຳລັດ 10 ປີ, ໃນນັ້ນຕ້ອງເຮັດວຽກຢູ່ທະນາຄານແຫ່ງ ສປປ ລາວ 5 ປີ ຂຶ້ນໄປ.

3. ມີຄວາມຫຍຸ້ງຍາກທາງດ້ານທີ່ພັກອາໄສ;
4. ບໍ່ເຄີຍຖືກປະຕິບັດວິໄນໂຈະການເລື່ອນຂັ້ນເງິນເດືອນ ຫຼື ຍ້ອງຍໍ, ຫຼຸດຕໍາແໜ່ງບໍລິຫານ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ມີຕໍາແໜ່ງຕໍ່າກວ່າເກົ່າ, ປົດຕໍາແໜ່ງທາງບໍລິຫານທັງໝົດ ແລະບັນທຶກໄວ້ໃນສໍານວນເອກະສານ ແລະປະຫວັດລັດຖະກອນ ( ຕາມທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ ) ໃນຊ່ວງໄລຍະ 5 ປີ ຜ່ານມາ;
5. ມີດິນທີ່ຈະປຸກສ້າງ ແລະໄດ້ດໍາເນີນການປຸກສ້າງ ຫຼື ສ້ອມແປງແລ້ວ 30% ຂອງມູນຄ່າທັງໝົດ.

## II. ວົງເງິນການປະຕິບັດນະໂຍບາຍແຕ່ລະຕໍາແໜ່ງງານ.

| | | |
|---|---|---|
| 1. | ເລຂາຄະນະພັກ, ຜູ້ວ່າການ ທຫລ | 400 ລ້ານ ກີບ |
| 2. | ຮອງເລຂາຄະນະພັກ, ຮອງຜູ້ວ່າການ ທຫລ | 350 ລ້ານ ກີບ |
| 3. | ຄະນະພັກ ທຫລ | 300 ລ້ານ ກີບ |
| 4. | ຫົວໜ້າກົມ ແລະທຽບເທົ່າ | 250 ລ້ານ ກີບ |
| 5. | ຮອງຫົວໜ້າກົມ ແລະທຽບເທົ່າ | 150 ລ້ານ ກີບ |
| 6. | ຫົວໜ້າພະແນກ ແລະທຽບເທົ່າ | 100 ລ້ານ ກີບ |
| 7. | ຮອງຫົວໜ້າພະແນກ ແລະທຽບເທົ່າ | 80 ລ້ານ ກີບ |
| 8. | ພະນັກງານວິຊາການ | 60 ລ້ານ ກີບ |

## III. ງົບປະມານທີ່ນໍາໃຊ້ໃນແຕ່ລະປີ.

ງົບປະມານທີ່ນໍາໃຊ້ແຕ່ລະປີ ແມ່ນໄດ້ມາຈາກແຫຼ່ງງົບປະມານຂອງທະນາຄານແຫ່ງ ສປປ ລາວ ທີ່ຂື້ນໄວ້ໃນແຕ່ລະປີ ຊຶ່ງໄດ້ຮັບການອະນຸມັດຈາກສະພາບໍລິຫານ ທຫລ.

## IV. ການຕິດຕາມແລະກວດກາການນໍາໃຊ້ທຶນ.

ຄະນະກໍາມະການການຄົ້ນຄວ້ານະໂຍບາຍຕໍ່ພະນັກງານ-ລັດຖະກອນທະນາຄານແຫ່ງ ສປປ ລາວ ຕິດຕາມ ແລະກວດກາການນໍາໃຊ້ເງິນດັ່ງກ່າວໃຫ້ຖືກຕ້ອງກັບເປົ້າໝາຍຕົວຈິງ ຊຶ່ງທຶນດັ່ງກ່າວແມ່ນນໍາໃຊ້ເຂົ້າເປັນທຶນສົມທົບປຸກສ້າງ ແລະສ້ອມແປງທີ່ພັກອາໄສເທົ່ານັ້ນ.

## V. ການຊໍາລະທຶນຄືນຂອງແຕ່ລະຕໍາແໜ່ງງານ.

ໃຫ້ຫ້ອງການເຮັດສັນຍາເງິນກູ້ ແລະຊໍາລະສະສາງກັບແຕ່ລະເປົ້າໝາຍເປັນໄລຍະຍາວຕາມລະບຽບຂອງທະນາຄານແຫ່ງ ສປປ ລາວ ແລະລະບຸໃນຮ່າງສັນຍາລະອຽດກ່ຽວກັບມາດຕະການທາງການເງິນ.

## VI. ການຈັດຕັ້ງປະຕິບັດ.

1. ມອບໃຫ້ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມ ແລະທຽບເທົ່າ ຈົ່ງຮັບຮູ້, ເປັນເຈົ້າການຈັດຕັ້ງເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໄດ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະທົ່ວເຖິງ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ. ຜ່ານການຈັດຕັ້ງປະຕິບັດຕົວຈິງໃນແຕ່ລະໄລຍະຖ້າພົບຄວາມຫຍຸ້ງຍາກ ໃຫ້ລາຍງານຄະນະຜູ້ວ່າການຊາບ ໂດຍຜ່ານຫ້ອງການ ແລະກົມຈັດຕັ້ງແລະພະນັກງານ;
2. ກົມຈັດຕັ້ງແລະພະນັກງານ ( ພະແນກນະໂຍບາຍແລະແຂ່ງຂັນ-ຍ້ອງຍໍ ) ຂຶ້ນແຜນງົບປະມານແຕ່ລະປີ, ຄົ້ນຄວ້າເປົ້າໝາຍສັງລວມລາຍຊື່ສະເໜີຜ່ານຄະນະກຳມະການການຄົ້ນຄວ້ານະໂຍບາຍຕໍ່ພະນັກງານ-ລັດຖະກອນທະນາຄານແຫ່ງ ສປປ ລາວ ແລ້ວນຳສະເໜີຄະນະພັກ ທຫລ ພິຈາລະນາຕົກລົງ;
3. ຄະນະກຳມະການການຄົ້ນຄວ້ານະໂຍບາຍຕໍ່ພະນັກງານ-ລັດຖະກອນທະນາຄານແຫ່ງ ສປປ ລາວ ຄົ້ນຄວ້ານະໂຍບາຍນີ້ໃຫ້ແຕ່ລະເປົ້າໝາຍຕາມການປຸກສ້າງ ຫຼື ສ້ອມແປງຕົວຈິງ, ແຕ່ບໍ່ເກີນວົງເງິນແຕ່ລະຕຳແໜ່ງງານ;
4. ຫ້ອງການຮ່າງສັນຍາເງິນກູ້ ແລະການຊຳລະສະສາງກັບແຕ່ລະເປົ້າໝາຍທີ່ໄດ້ຮັບນະໂຍບາຍນີ້;
5. ພະນັກງານທ່ານໃດທີ່ສະເໜີຂໍນະໂຍບາຍນີ້ ຫາກບໍ່ຄົບເງື່ອນໄຂຕາມທີ່ໄດ້ລະບຸໄວ້ຂ້າງເທິງ ແມ່ນຈະບໍ່ໄດ້ຮັບການພິຈາລະນາ;
6. ທ່ານໃດທີ່ໄດ້ຮັບນະໂຍບາຍນີ້ຄົບຕາມວົງເງິນທີ່ໄດ້ກຳນົດໃນໄລຍະຜ່ານມາແລ້ວ ແມ່ນຈະບໍ່ໄດ້ຮັບການຄົ້ນຄວ້າພິຈາລະນາຕື່ມອີກ ( ຍົກເວັ້ນກໍລະນີພິເສດ );
7. ຄຳແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມຈັດຕັ້ງແລະພະນັກງານ

ຄຳວົງ ຫີບພະວົງ